ກະຊວງສຶກສາ ແລະ ກໍ່ສ້າງ

ມະຫາວິທະຍາໄລ ວິສະວະກຳກໍ່ສ້າງຮ່າໂນ້ຍ

ເລກທີ: 267/ມລ ວິສະວະກຳກໍ່ສ້າງ ຮ່າໂນ້ຍ-TSDH

ສາທາລະນະລັດ ສັງຄົມນິຍົມຫວຽດນາມ

ເອກະລາດ-ເສລີພາບ-ຄວາມຜາສຸກ

ທີ່ ຮ່າໂນ້ຍ, ວັນທີ 29 /04/ 2022

# ແຈ້ງການຮັບສະໝັກເຂົ້າຮຽນ

## ມະຫາວິທະຍາໄລ ລະບົບປົກກະຕິ ໃນສົກປີ 2022 ສຳລັບນັກສຶກສາລາວ

1. **ຈຸດປະສົງການລົງທະບຽນ :** ນັກສຶກສາລາວ
2. **ຈຳນວນທີ່ຮັບສະໝັກ :** 30 ຄົນ
3. **ສາຂາວິຊາຮຽນ ແລະ ໄລຍະເວລາຮຽນ:**

| ລ/ດ | ສາຂາຮຽນ | ໄລລະເວລາ |
|---|---|---|
| 1 | ສະຖາປັດ | ນັບແຕ່ສົກຮຽນປີ 2020 (ລຸ້ນK65), ບັນດາລະບົບບາລຸງ-ກໍ່ສ້າງ ຂອງມະຫາວິທະຍາໄລ ວິສະວະກຳກໍ່ສ້າງ ຮ່າໂນ້ຍ ໄດ້ອອກແບບຕາມ 3 ລັກຊະນະລຸ່ມນີ້:<br>a) ລະບົບປະລິນຍາຕີ ວິສະວະກຳສາດ/ສະຖາປັດ (4 ປີ), ຜູ້ຮຽນຈົບຈະໄດ້ຮັບໃບປະກາດປະລິນຍາຕີ (ປຕ).<br>b) ລະບົບຕໍ່ເນື່ອງປະລິນຍາຕີ ແລະ ວິສະວະ ກອນ/ສະຖາປະນິກ (5-5,5 ປີ), ຜູ້ຮຽນຈົບຈະໄດ້ຮັບໃບປະກາດປະລິນຍາຕີ (ປຕ) ແລະ ໃບຢັ້ງຢືນວິສະວະກອນ/ສະຖາປະນິກ (ເໜືອປະລິນຍາຕີ).<br>c) ລະບົບຕໍ່ເນື່ອງປະລິນຍາຕີ ແລະ ໂທ(5,5ປີ), ຜູ້ຮຽນຈົບໄດ້ຮັບໃບປະກາດປະລິນຍາຕີ(ປຕ) ແລະ ປະລິນຍາໂທ (ປທ)<br>ອີງຕາມແຜນສ່ວນບຸກຄົນ (ທັງຮຽນ/ເຮັດວຽກໄປພ້ອມ) ນັກສຶກສາ ສາມາດເລືອກລົງທະບຽນລະບົບທີ່ເໝາະສົມໃນທ້າຍປີຮຽນທີ 3. |
| 2 | ການວາງແຜນຜັງເມືອງ ແລະ ຕົວເມືອງ | |
| 3 | ວິສະວະກຳການກໍ່ສ້າງ | |
| 4 | ວິສະວະກຳການກໍ່ສ້າງວຽກງານຈາລະຈອນ | |
| 5 | ວິສະວະກຳການສະໜອງນໍ້າ ແລະ ລະບົບລະບາຍນໍ້າ | |
| 6 | ວິສະວະກຳສິ່ງແວດລ້ອມ | |
| 7 | ວິສະວະກຳວັດສະດຸ | |
| 8 | ວິສະວະກຳເຕັກໂນໂລຊີວັດສະດຸກໍ່ສ້າງ | |
| 9 | ເຕັກໂນໂລຊີຂໍ້ມູນຂ່າວສານ | |
| 10 | ວິທະຍາສາດຄອມພິວເຕີ | |
| 11 | ວິສະວະກຳກົນຈັກ | |
| 12 | ການກໍ່ສ້າງທາງເສດຖະກິດ | |
| 13 | ຄຸ້ມຄອງການກໍ່ສ້າງ | |
| 14 | ການຂົນສົ່ງ ແລະ ຄຸ້ມຄອງການສະໜອງລະບົບຕ່ອງໂສ້ | |

4. **ວິທີສະໝັກ ແລະ ເງື່ອນໄຂການເຂົ້າຮຽນ:**

4.1. **ວິທີສະໝັກ:** ການເຂົ້າຮຽນ

4.2. **ເງື່ອນໄຂຜູ້ສະໝັກ:**

- ຜູ້ທີ່ຮຽນຈົບຊັ້ນມັດທະຍົມຕອນປາຍ, ຄະແນນສະເລ່ຍແຕ່ລະວິຊາ ໃນລະດັບມັດທະຍົມປາຍລວມ 3 ວິຊາ: ຄະນິດສາດ, ຟີຊິກ, ເຄມີ; ຄະນິດສາດ, ຟີຊິກ, ພາສາຕ່າງປະເທດ ຫຼື ຄະນິດສາດ, ເຄມີ, ພາສາຕ່າງປະເທດ (ພາສາອັງກິດ ຫຼື ພາສາຝຣັ່ງ) ຕ້ອງໄດ້ຄະແນນ 5,0 ຂຶ້ນໄປ (ຄະແນນເຕັມ 10).

- ມີໃບຢັ້ງຢືນພາສາຫວຽດນາມ ທີ່ພະແນກສຶກສາທິການ ແລະ ກິລາ ອານຸຍາດໃຫ້ນຳໃຊ້ ຫຼື ໃບຢັ້ງຢືນ ກ່ຽວກັບພາສາຕ່າງປະເທດກໍສາມາດຮຽນຢູ່ຫວຽດນາມໄດ້. ກໍລະນີທີ່ນັກສຶກສາຍັງບໍ່ໄດ້ຮຽນກຽມພາສາຫວຽດນາມກໍ່ສາມາດລົງທະບຽນຮຽນໄດ້, ຫຼັງຈາກຮູ້ຜົນຂອງການສອບເສັງຄັດເລືອກເຂົ້າຮຽນແລ້ວ ໂຮງຮຽນຈະສົ່ງນັກສຶກສາໄປຮຽນຢູ່ໂຮງຮຽນຝຶກສອນພາສາຫວຽດນາມ ຫຼັງຈາກຈົບຫຼັກສູດແລ້ວ ຖ້ານັກສຶກສາເສັງຜ່ານລະດັບພາສາຫວຽດນາມຕາມກຳນົດ, ທາງໂຮງຮຽນຈະເປີດຮັບເຂົ້າຮຽນຢ່າງເປັນທາງການ.
- ນັກສຶກສາທີ່ລົງທະບຽນເຂົ້າຮຽນບັນດາວິຊາທີ່ຂຶ້ນກັບຂະແໜງສະຖາປັດ, ການວາງແຜນຜັງເມືອງ ແລະ ຕົວເມືອງ, ພາຍຫຼັງເຂົ້າຮຽນ ຈະໄດ້ເກັບໜ່ວຍກິດວິຊາ ວິຈິດສິນ ແລະ ເຂົ້າຮ່ວມການທົດສອບຄວາມສາມາດຕົວຈິງຕາມລະບຽບ.
- ມີສຸຂະພາບແຂງແຮງດີ; ບໍ່ເປັນໂລກຕິດຕໍ່ທີ່ຮ້າຍແຮງ; ໂລກຕິດເຊື້ອທີ່ອັນຕະລາຍ ຕາມແຈ້ງການຂອງກະຊວງສາທາລະສຸກຫວຽດນາມ.

5. **ປະກອບເອກະສານສະໝັກເຂົ້າຮຽນ:** ນັກສຶກສາສົ່ງໃບສະໝັກ 01 ຊຸດຂຽນເປັນພາສາຫວຽດ ຫຼື ພາສາອັງກິດກໍ່ໄດ້ ລວມທັງເອກະສານຄັດຕິດດັ່ງລຸ່ມນີ້:
   - ແບບຟອມສະໝັກລົງທະບຽນຮຽນທີ່ມີຂໍ້ມູນຄົບຖ້ວນສົມບູນ (ຕາມເອກະສານຊ້ອນທ້າຍ)
   - ຊີວະປະຫວັດຫຍໍ້ພ້ອມຮູບ 4x6 (ຮູບຖ່າຍບໍ່ເກີນ 6 ເດືອນ)
   - ສຳເນົາ, ການແປໃບປະກາດ ແລະ ໃບຄະແນນຈົບຊັ້ນ ຈາກໜ່ວຍງານ ຫຼື ອຳນາດການປົກຄອງທີ່ໄດ້ຮັບອານຸຍາດຢັ້ງຢືນ
   - ສຳເນົາໃບຢັ້ງຢືນພາສາຫວຽດ ທີ່ຖືກຮັບຮອງຈາກພະແນກສຶກສາ ຫຼື ໃບຢັ້ງຢືນກ່ຽວກັບພາສາຕ່າງປະເທດກໍສາມາດຮຽນຢູ່ຫວຽດນາມໄດ້
   - ສຳເນົາເອກະສານທາງການເງິນ (ບັນຊີທະນາຄານ) ເພື່ອຮັບປະກັນການຮຽນ ແລະ ການໃຊ້ຊີວິດຢູ່ຫວຽດນາມ
   - ສຳເນົາໃບຮັບຮອງຄວາມສາມາດພິເສດ, ຮັບຮອງຜົນສຳເລັດໃດໜຶ່ງ...(ຖ້າມີ)
   - ໃບຢັ້ງຢືນສຸຂະພາບທີ່ພະແນກສາທາລະນະສຸກໃຫ້ການຍອມຮັບ ຫຼື ພະແນກສາທາແຂວງ, ນະຄອນຫລວງ ຫຼື ໂຮງໝໍສູນກາງຂອງຫວຽດຢັ້ງຢືນໃຫ້ (ບໍ່ເກີນ 6 ເດືອນ)

6. **ສະຖານທີ່ຮຽນ:**

   ມະຫາວິທະຍາໄລ ວິສະວະກຳກໍ່ສ້າງຮ່າໂນ້ຍ

   ຖະໜົນເລກທີ 55 ຢາຍຟອງ, ເມືອງ Hai Ba Trung, ນະຄອນຫຼວງຮ່າໂນ້ຍ

7. **ໄລຍະເວລາສົ່ງເອກະສານ:**

   ເລີ່ມແຕ່ວັນທີ 15/06/2022 ຫາ ວັນທີ 31/08/2022

8. **ທຶນການສຶກສາ, ຄ່າຮຽນ ແລະ ທີ່ພັກ:**

8.1. ທຶນການສຶກສາ: 04/06 ນັກສຶກສາ

**ຜູ້ໄດ້ຮັບທຶນ:** ນັກສຶກສາຂອງໂຮງຮຽນຊິນເຜົ່າ ແລະ ໂຮງຮຽນແລກປ່ຽນກັບມະຫາວິທະຍາໄລວິສະວະກຳກໍ່ສ້າງ ຮ່າໂນ້ຍ

**ຜູ້ໃຫ້ທຶນຮັບຜິດຊອບ:** ຍົກເວັ້ນຄ່າຮຽນ,ລວມເຖິງຄ່າຮຽນກຽມພາສາຫວຽດນາມ (ຖ້າມີ)

8.2. ຄ່າຮຽນ (ສໍາລັບນັກສຶກສາຜູ້ທີ່ບໍ່ໄດ້ຮັບທຶນການສຶກສາ)

ຄ່າຮຽນທີ່ນັກສຶກສາຕ້ອງຈ່າຍແມ່ນເທົ່າກັບຄ່າຮຽນຂອງນັກສຶກສາຫວຽດນາມທີ່ຮຽນຢູ່ໂຮງຮຽນ (ຄາດວ່າຈະຕ້ອງຈ່າຍຄ່າຮຽນໃນສົກປີ 2022-2023 ແມ່ນ:13.000.000 ດົງ)

8.3. ທີ່ພັກອາໄສ: ພັກຟຣີຕະຫລອດໄລຍະເວລາຮຽນຢູ່ໂຮງຮຽນ (ຖ້ານັກສຶກສາມີຄວາມຕ້ອງການຢູ່ຫໍພັກຂອງໂຮງຮຽນ)

ນັກສຶກສາທຸກຄົນຈະໄດ້ຮັບການພິຈາລະນາສໍາລັບທຶນການສຶກສາອື່ນໆ ຄືກັນກັບນັກສຶກສາຫວຽດນາມທີ່ກໍາລັງສຶກສາຢູ່ໂຮງຮຽນ. ນອກຈາກນັ້ນ, ນັກສຶກສາຈະໄດ້ຮັບສິດທິອື່ນໆ ແລະ ປະຕິບັດຕາມຂໍ້ກໍານົດ ກົດລະບຽບຂອງກະຊວງສຶກສາ ແລະ ກໍ່ສ້າງ ວ່າດ້ວຍການຄຸ້ມຄອງຄົນຕ່າງປະເທດທີ່ມາສຶກສາຢູ່ຫວຽດນາມ.

9. ທີ່ຢູ່ຕິດຕໍ່:

ພະແນກພົວພັນສາກົນ

ຊັ້ນ 1 ອາຄານ H2 - ມະຫາວິທະຍາໄລ ວິສະວະກໍາກໍ່ສ້າງ ຮ່າໂນ້ຍ

ຖະໜົນເລກທີ 55 ຢາຍຟ້ອງ, ເມືອງ Hai Ba Trung, ນະຄອນຫຼວງຮ່າໂນ້ຍ

ເບີໂທ: (024) 32181583, ມືຖື: (84) 933 319 368

Email: dtqt@huce.edu.vn

Website: https://huce.edu.vn/

ຮອງຜູ້ອໍານວຍການໂຮງຮຽນ

PGS.TS. PhamXuanAnh